ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່

ເລກທີ 0739 /ພບ
ນະຄອນຫຼວງວຽງຈັນ, ລົງວັນທີ 09 JUN 2020

# ຄຳແນະນຳ
# ກ່ຽວກັບຂັ້ນຕອນການຂໍອະນຸຍາດລົງທຶນຊອກຄົ້ນ ແລະ ສຳຫຼວດແຮ່ທາດ

- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017 (ມາດຕາ 42);
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 296/ນຍ, ລົງວັນທີ 4 ກັນຍາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງພະລັງງານ ແລະ ບໍ່ແຮ່.

**ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ອອກຄຳແນະນຳ:**

## ໝວດ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຄຳແນະນຳສະບັບນີ້ ວາງອອກເພື່ອ ແນະນຳ, ອະທິບາຍຂັ້ນຕອນຂອງການຂໍອະນຸຍາດລົງທຶນຊອກຄົ້ນ ແລະ ສຳຫຼວດແຮ່ທາດ, ເປັນຄູ່ມືໃນການຄຸ້ມຄອງ ຕິດຕາມກວດກາ ແລະ ອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນໃນວຽກງານຊອກຄົ້ນ ແລະ ສຳຫຼວດ ແຮ່ທາດ ຢູ່ ສປປ ລາວ, ແນໃສ່ເຮັດໃຫ້ການຄຸ້ມຄອງຊັບພະຍາກອນແຮ່ທາດ ແລະ ການດຳເນີນທຸລະກິດຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ເປັນລະບົບຖືກຕ້ອງຕາມເຕັກນິກ, ໂປ່ງໃສ ແລະ ມີປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ການລົງທຶນຊອກຄົ້ນ ແລະ ສຳຫຼວດແຮ່ທາດ

ການລົງທຶນຊອກຄົ້ນ ແລະ ສຳຫຼວດແຮ່ທາດ ແມ່ນການນຳເອົາເງິນທຶນ, ຊັບສິນ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ມາລົງທຶນໃສ່ການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໃນເຂດເນື້ອທີ່ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ໂດຍສອດຄ່ອງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍແຮ່ທາດ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

### ມາດຕາ 3 ຂອບເຂດການນຳໃຊ້ ຄຳແນະນຳ

ຄຳແນະນຳສະບັບນີ້ນຳໃຊ້ສຳລັບ ອົງການຈັດຕັ້ງລັດ, ລັດວິສາຫະກິດ, ນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບບໍ່ແຮ່.

# ໝວດ 2
## ຂັ້ນຕອນຂອງການສະເໜີຂໍອະນຸຍາດລົງທຶນຂຸດຄົ້ນ ແລະ ສຳຫຼວດແຮ່ທາດ

**ມາດຕາ 4 ຂັ້ນຕອນຂອງການສະເໜີຂໍອະນຸຍາດລົງທຶນຂຸດຄົ້ນ ແລະ ສຳຫຼວດແຮ່ທາດ**

ຂັ້ນຕອນຂອງການສະເໜີຂໍອະນຸຍາດລົງທຶນຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ມີດັ່ງນີ້:

1. ນິຕິບຸກຄົນ, ລັດວິສາຫະກິດ ທີ່ມີຄວາມສົນໃຈລົງທຶນໃນກິດຈະການຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ຕ້ອງສະເໜີຫາກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອລົງເກັບກຳຂໍ້ມູນເບື້ອງຕົ້ນແຮ່ທາດ ໂດຍປະຕິບັດຕາມ ມາດຕາ 43, 44 ແລະ 45 ຂອງກົດໝາຍວ່າດ້ວຍແຮ່ທາດ;
2. ນິຕິບຸກຄົນ, ລັດວິສາຫະກິດ ຕ້ອງປະກອບເອກະສານຄົບຊຸດ ຍື່ນສະເໜີຂໍລົງທຶນຕາມຂັ້ນຕອນນຳກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າພິຈາລະນາໃນການອອກໃບອະນຸຍາດລົງທຶນ ໂດຍປະຕິບັດຕາມ ມາດຕາ 42 ຂອງກົດໝາຍວ່າດ້ວຍແຮ່ທາດ;
3. ພາຍຫຼັງໄດ້ຮັບການເຫັນດີຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາ ອອກໃບອະນຸຍາດຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ບໍລິສັດດ້ວຍຄວາມເປັນເອກະພາບດ້ານເນື້ອທີ່ຈາກພາກສ່ວນທີ່ກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ຊຶ່ງລາຍລະອຽດຂັ້ນຕອນອອກໃບອະນຸຍາດ ປະຕິບັດຕາມ ມາດຕາ 46 ແລະ 50 ຂອງກົດໝາຍວ່າດ້ວຍແຮ່ທາດ.

**ມາດຕາ 5 ຄຳຮ້ອງຂໍລົງທຶນຂຸດຄົ້ນ ແລະ ສຳຫຼວດແຮ່ທາດ**

ຄຳຮ້ອງຂໍລົງທຶນຂຸດຄົ້ນ ແລະ ສຳຫຼວດແຮ່ທາດ ທີ່ຫ້ອງການບໍລິການ ການລົງທຶນປະຕູດຽວ ໃນຂະແໜງບໍ່ແຮ່ ຕ້ອງມີເອກະສານຕົ້ນຕໍ ດັ່ງນີ້:

1. ຄຳຮ້ອງຂໍລົງທຶນ;
2. ປະຫວັດ ແລະ ປະສົບການ ຂອງຜູ້ລົງທຶນ ຫຼື ບໍລິສັດ, ບັດປະຈຳຕົວ, ໃບແຈ້ງໂທດ, ສຳເນົາໜັງສືເດີນທາງ, ທະບຽນວິສາຫະກິດ ກໍລະນີເປັນນິຕິບຸກຄົນ;
3. ສັນຍາຮ່ວມທຸລະກິດ;
4. ໃບມອບສິດໃຫ້ຜູ້ຕາງໜ້າ ບັນດາຂາຮຸ້ນ ຫຼື ຜູ້ຖືຮຸ້ນຂອງວິສາຫະກິດ, ໃນກໍລະນີບຸກຄົນດັ່ງກ່າວບໍ່ຢູ່ໃນຕຳແໜ່ງສູງສຸດຂອງບໍລິສັດ;
5. ແຜນການດຳເນີນທຸລະກິດ ຊຶ່ງກຳນົດ ເນື້ອໃນຕົ້ນຕໍ ເຊັ່ນ: ບົດລາຍງານການເກັບກຳຂໍ້ມູນພາກສະໜາມ, ຈຸດປະສົງການລົງທຶນ, ຄາດຄະເນມູນຄ່າການລົງທຶນ, ທີ່ຕັ້ງໂຄງການ, ກຳນົດເວລາດຳເນີນງານ, ປະສິດທິຜົນຂອງໂຄງການ, ຄວາມຕ້ອງການດ້ານແຮງງານ, ຄວາມຕ້ອງການເຊົ່າ ຫຼື ສຳປະທານທີ່ດິນລັດ, ຄວາມອາດສາມາດເປັນໄປໄດ້ທາງດ້ານເສດຖະກິດ-ເຕັກນິກ ແລະ ການເງິນ, ຄາດຄະເນການແບ່ງຜົນປະໂຫຍດ, ແຜນການ ແລະ ຂັ້ນຕອນການດຳເນີນງານ, ເອກະສານ ຢັ້ງຢືນການສະໜັບສະໜູນທຶນ, ຂໍ້ສະເໜີດ້ານນະໂຍບາຍການລົງທຶນ;
6. ບົດປະເມີນຜົນກະທົບເບື້ອງຕົ້ນດ້ານສິ່ງແວດລ້ອມ ສັງຄົມ ແລະ ທຳມະຊາດ;
7. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນ ຈາກສະຖາບັນ ການເງິນ ຫຼື ທະນາຄານ.
8. ກົດລະບຽບ ແລະ ໂຄງຮ່າງການຈັດຕັ້ງ ຂອງບໍລິສັດ.

**ມາດຕາ 6 ແຜນການຂຸດຄົ້ນແຮ່ທາດ**

ແຜນການຂຸດຄົ້ນແຮ່ທາດ ແມ່ນການກຳນົດໜ້າວຽກທາງດ້ານເຕັກນິກການຂຸດຄົ້ນແຮ່ທາດ, ແຜນການຂຸດຄົ້ນແຮ່ທາດປະກອບມີໜ້າວຽກຕົ້ນຕໍ ດັ່ງນີ້:

1. ວິເຄາະຮູບຖ່າຍທາງອາກາດ;
2. ວັດແທກທໍລະນີຟີຊິກ (ຕາມຄວາມເໝາະສົມ);
3. ສ້າງແຜນທີ່ທໍລະນີສາດ ແລະ ແຮ່ທາດ;
4. ແຜນເກັບຕົວຢ່າງທາງທໍລະນີເຄມີ ແລະ ຕົວຢ່າງປະເພດອື່ນທີ່ເໝາະສົມພ້ອມທັງແຜນການວິໄຈຕົວຢ່າງທີ່ກ່ຽວຂ້ອງ;
5. ທໍລະນີວິສາວະກຳ (ຕາມຄວາມເໝາະສົມ);
6. ແລະ ວຽກງານອື່ນທີ່ເຫັນວ່າຈຳເປັນ ແລະ ເໝາະສົມກັບໄລຍະຂຸດຄົ້ນແຕ່ລະປະເພດແຮ່ທາດ;
7. ແຜນການຂຸດຄົ້ນ ແລະ ຄ່າໃຊ້ຈ່າຍຕໍ່າສຸດ ພ້ອມທັງແຫຼ່ງທຶນທີ່ຈະນຳໃຊ້ເຂົ້າໃນການຂຸດຄົ້ນ.

ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາຮັບຮອງແຜນການຂຸດຄົ້ນແຮ່ທາດ ພາຍໃນ ສາມສິບ (30) ວັນ ພາຍຫຼັງເອກະສານຄົບຖ້ວນ, ຖ້າເອກະສານບໍ່ຄົບຖ້ວນ ຈະແຈ້ງໃຫ້ບໍລິສັດເປັນລາຍລັກອັກສອນ ພາຍໃນ ສິບ (10) ວັນລັດຖະການ ຫລັງຈາກ ທີ່ຕົນໄດ້ຮັບ.

ບໍລິສັດ ຕ້ອງປັບປຸງເນື້ອໃນເອກະສານໃຫ້ຄົບຖ້ວນ ແລ້ວສົ່ງຄືນໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ.

ແຜນການຂຸດຄົ້ນແຮ່ທາດ ນຳໃຊ້ ພາສາລາວ ເປັນຫຼັກ, ຖ້ານຳໃຊ້ ພາສາອັງກິດ ຕ້ອງສັງລວມຫຍໍ້ເປັນພາສາລາວ ແລະ ຕ້ອງໄດ້ຖືກຮັບຮອງຈາກນັກທໍລະນີສາດອາວຸໂສ (ຜູ້ຊໍານານງານ) ແລະ ຜູ້ອຳນວຍການຂອງບໍລິສັດ.

**ມາດຕາ 7 ການຂໍໃບອະນຸຍາດຂຸດຄົ້ນແຮ່ທາດ**

ການຂໍໃບອະນຸຍາດຂຸດຄົ້ນແຮ່ທາດ ຕ້ອງປະຕິບັດຕາມ ມາດຕາ 46 ຂອງກົດໝາຍວ່າດ້ວຍແຮ່ທາດ.

**ມາດຕາ 8 ການພິຈາລະນາອອກໃບອະນຸຍາດຂຸດຄົ້ນແຮ່ທາດ**

ກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາອອກໃບອະນຸຍາດຂຸດຄົ້ນແຮ່ທາດ ພາຍໃນ ສາມສິບ (30) ວັນ ພາຍຫຼັງເອກະສານຄົບຖ້ວນ, ຖ້າເອກະສານບໍ່ຄົບຖ້ວນ ຕ້ອງແຈ້ງໃຫ້ບໍລິສັດເປັນລາຍລັກອັກສອນເພື່ອໃຫ້ກວດແກ້ ແລະ ປັບປຸງຄືນ ພາຍໃນ ສິບ (10) ວັນລັດຖະການ ຫລັງຈາກທີ່ຕົນໄດ້ຮັບ.

ບໍລິສັດ ຕ້ອງປັບປຸງເນື້ອໃນເອກະສານໃຫ້ຄົບຖ້ວນ ແລ້ວສົ່ງຄືນໃຫ້ກົມທໍລະນີສາດ ແລະ ແຮ່ທາດພິຈາລະນາ ຢ່າງຊ້າ ສິບ (10) ວັນລັດຖະການ.

ອາຍຸໃບອະນຸຍາດຂຸດຄົ້ນແຮ່ທາດ ໃຫ້ຖືເອົາມື້ທີ່ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ອອກຂໍ້ຕົກລົງວ່າດ້ວຍການຂຸດຄົ້ນແຮ່ທາດ ເປັນຕົ້ນໄປ.

**ມາດຕາ 9 ການປັກຫຼັກໝາຍເນື້ອທີ່ຂຸດຄົ້ນແຮ່ທາດ ພາກສະໜາມ**

ບໍລິສັດ ຕ້ອງສະເໜີໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອໄປປັກຫຼັກໝາຍເນື້ອທີ່ຂຸດຄົ້ນແຮ່ທາດ ຢູ່ພາກສະໜາມ, ເຜີຍແຜ່ເອກະສານກ່ຽວກັບການເຫັນດີອະນຸຍາດໃຫ້ດຳເນີນການຂຸດຄົ້ນແຮ່ທາດ ພ້ອມທັງແຈ້ງແຜນການດຳເນີນງານ, ນິຕິກຳຕ່າງໆກ່ຽວກັບໂຄງການ. ການປັກຫຼັກໝາຍເນື້ອທີ່ຂຸດຄົ້ນແຮ່ທາດ ຕ້ອງປະຕິບັດຕາມລະບຽບການທີ່ກະຊວງພະລັງງານ ແລະ ບໍ່ແຮ່ ວາງອອກ.

ການມີສ່ວນຮ່ວມຂອງໜ່ວຍງານໃນການປັກຫຼັກໝາຍເນື້ອທີ່ຊອກຄົ້ນແຮ່ທາດພາກສະໜາມ ປະກອບດ້ວຍພາກສ່ວນຕ່າງໆ ດັ່ງນີ້:

1. ຕາງໜ້າກົມທໍລະນີສາດ ແລະ ແຮ່ທາດ 02 ທ່ານ;
2. ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ 01 ທ່ານ;
3. ຕາງໜ້າຫ້ອງວ່າການປົກຄອງເມືອງ, ນະຄອນ 01 ທ່ານ;
4. ຕາງໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ນະຄອນ 01 ທ່ານ;
5. ຕາງໜ້າອົງການປົກຄອງບ້ານບ່ອນໂຄງການຕັ້ງຢູ່ 01 ທ່ານ.

ພາຍຫຼັງສຳເລັດການປັກຫຼັກໝາຍເນື້ອທີ່ຊອກຄົ້ນພາກສະໜາມແລ້ວ ໜ່ວຍງານກ່ຽວຂ້ອງຕ້ອງລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ກົມທໍລະນີສາດ ແລະ ແຮ່ທາດ ຮັບຊາບ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ.

### ມາດຕາ 10 ການດຳເນີນວຽກງານຊອກຄົ້ນແຮ່ທາດ

ບໍລິສັດ ຕ້ອງດຳເນີນວຽກງານຊອກຄົ້ນແຮ່ທາດ ໃນເຂດເນື້ອທີ່ທີ່ໄດ້ຮັບອະນຸຍາດ ພາຍໃນ ສາມສິບ (30) ວັນ ພາຍຫຼັງໄດ້ຮັບໃບອະນຸຍາດຊອກຄົ້ນແຮ່ທາດ ຈາກກະຊວງພະລັງງານ ແລະ ບໍ່ແຮ່, ພ້ອມທັງປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນໂຄງການຕັ້ງຢູ່, ຊຶ່ງການດຳເນີນວຽກງານພາກສະໜາມຕ້ອງມີວິຊາການ ຈາກຂະແໜງການພະລັງງານ ແລະ ບໍ່ແຮ່ ເຂົ້າຮ່ວມ.

### ມາດຕາ 11 ການລາຍງານຜົນການຊອກຄົ້ນແຮ່ທາດ

ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການຊອກຄົ້ນແຮ່ທາດ ຕ້ອງລາຍງານຄວາມຄືບໜ້າຜົນການດຳເນີນວຽກງານຊອກຄົ້ນ ປະຈຳງວດ, ປະຈຳປີ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ (ສູນກາງ ແລະ ທ້ອງຖິ່ນ) ເພື່ອຊາບ.

ການລາຍງານຄວາມຄືບໜ້າຂອງວຽກງານຊອກຄົ້ນແຮ່ທາດ ແມ່ນການລາຍງານໜ້າວຽກທີ່ໄດ້ຈັດຕັ້ງປະຕິບັດຕາມແຜນການຊອກຄົ້ນແຮ່ທາດທີ່ໄດ້ຖືກຮັບຮອງໂດຍກະຊວງພະລັງງານ ແລະ ບໍ່ແຮ່.

ການລາຍງານຜົນການຊອກຄົ້ນແຮ່ທາດ ແມ່ນການລາຍງານຕາມແບບຟອມບົດລາຍງານຜົນການຊອກຄົ້ນແຮ່ທາດ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ວາງອອກ. ບົດລາຍງານຜົນການຊອກຄົ້ນແຮ່ທາດຕ້ອງໄດ້ຖືກຮັບຮອງຈາກນັກທໍລະນີສາດອາວຸໂສ (ຜູ້ຊຳນານງານ) ແລະ ຜູ້ອຳນວຍການຂອງບໍລິສັດ

ບໍລິສັດຕ້ອງສົ່ງບົດລາຍງານ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ພິຈາລະນາຢ່າງໜ້ອຍ ເກົ້າສິບ (90) ວັນ ກ່ອນທີ່ໃບອະນຸຍາດຊອກຄົ້ນແຮ່ທາດ ຈະໝົດອາຍຸ.

### ມາດຕາ 12 ການກວດກາວຽກງານເຕັກນິກພາກສະໜາມ

ການກວດກາວຽກງານເຕັກນິກພາກສະໜາມ ແມ່ນການກວດກາການຈັດຕັ້ງປະຕິບັດວຽກງານຜົນການຊອກຄົ້ນແຮ່ທາດ ຕາມແຜນການທີ່ໄດ້ຖືກຮັບຮອງຈາກກະຊວງພະລັງງານ ແລະ ບໍ່ແຮ່, ຊຶ່ງວຽກງານທີ່ຈະຖືກກວດກາບໍລິສັດຕ້ອງປະຕິບັດໃຫ້ໄດ້ຢ່າງໜ້ອຍ ເກົ້າສິບ (90) ສ່ວນຮ້ອຍ ຂອງແຕ່ລະໜ້າວຽກ.

ຄະນະກວດກາວຽກງານເຕັກນິກພາກສະໜາມ ປະກອບດ້ວຍພາກສ່ວນຕ່າງໆ ດັ່ງນີ້:

1. ຕາງໜ້າກົມທໍລະນີສາດ ແລະ ແຮ່ທາດ 02 ທ່ານ;
2. ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ 01 ທ່ານ;
3. ຕາງໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ນະຄອນ 01 ທ່ານ;
4. ຕາງໜ້າອົງການປົກຄອງບ້ານບ່ອນໂຄງການຕັ້ງຢູ່ 01 ທ່ານ.

ພາຍຫຼັງສຳເລັດການກວດກາວຽກງານເຕັກນິກພາກສະໜາມແລ້ວ ໜ່ວຍງານກ່ຽວຂ້ອງຕ້ອງລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ກົມທໍລະນີສາດ ແລະ ແຮ່ທາດ ຮັບຊາບ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ.

## ມາດຕາ 13 ການຮັບຮອງບົດລາຍງານຜົນການຊອກຄົ້ນແຮ່ທາດ

ຂະແໜງການພະລັງງານ ແລະ ບໍ່ແຮ່ (ສູນກາງ ແລະ ທ້ອງຖິ່ນ) ຕ້ອງຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບົດລາຍງານຜົນການຊອກຄົ້ນແຮ່ທາດ ພາຍໃນກຳນົດເວລາ ສາມສິບ (30) ວັນລັດຖະການ.

ໃນກໍລະນີ ເນື້ອໃນບົດລາຍງານບໍ່ຄົບຖ້ວນ, ບໍ່ຈະແຈ້ງ ຂະແໜງການພະລັງງານ ແລະ ບໍ່ແຮ່ ຕ້ອງແຈ້ງໃຫ້ບໍລິສັດ ຮັບຊາບຢ່າງເປັນລາຍລັກອັກສອນ ພາຍໃນ ສິບຫ້າ (15) ວັນລັດຖະການ. ບໍລິສັດ ຕ້ອງປັບປຸງເນື້ອໃນເອກະສານໃຫ້ຄົບຖ້ວນ ແລ້ວສົ່ງຄືນໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ພິຈາລະນາ ຢ່າງຊ້າ ສິບ (10) ວັນລັດຖະການ.

ການຮັບຮອງບົດລາຍງານຜົນການຊອກຄົ້ນແຮ່ທາດ ຕ້ອງໄດ້ຜ່ານກອງປະຊຸມທາງດ້ານວິຊາການ ເພື່ອສັງລວມຂໍ້ມູນ ແລະ ເປັນເງື່ອນໄຂໃນການຮັບຮອງບົດລາຍງານຜົນການຊອກຄົ້ນແຮ່ທາດ ພາຍໃນກຳນົດເວລາ ຊາວ (20) ວັນລັດຖະການ ຫຼັງຈາກບົດລາຍງານໄດ້ຖືກປັບປຸງຄົບຖ້ວນຕາມການແນະນຳຂອງກອງປະຊຸມດັ່ງກ່າວ ແລະ ການເຫັນດີຂອງການນຳກະຊວງພະລັງງານ ແລະ ບໍ່ແຮ່.

ບົດລາຍງານຜົນການຊອກຄົ້ນແຮ່ທາດ ນຳໃຊ້ ພາສາລາວ ເປັນຫຼັກ, ຖ້ານຳໃຊ້ ພາສາອັງກິດ ຕ້ອງສັງລວມຫຍໍ້ບົດລາຍງານເປັນພາສາລາວ, ພ້ອມດຽວກັນນັ້ນ ການສະເໜີຜ່ານບົດລາຍງານຜົນການຊອກຄົ້ນແຮ່ທາດ ຕ້ອງແມ່ນນັກວິຊາການທໍລະນີສາດອາວຸໂສ (ຜູ້ຊຳນານງານ) ຂອງບໍລິສັດເປັນຜູ້ສະເໜີ.

## ມາດຕາ 14 ການເພີ່ມແຮ່ທາດ

ພາຍຫຼັງສຳເລັດການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຖ້າພົບແຮ່ທາດອື່ນ ທີ່ບໍ່ໄດ້ລະບຸໄວ້ໃນໃບອະນຸຍາດ ບໍລິສັດມີສິດສະເໜີຂໍເອົາແຮ່ທາດດັ່ງກ່າວ ເພີ່ມເຂົ້າໃນໃບອະນຸຍາດ ໂດຍບໍລິສັດຕ້ອງປະກອບເອກະສານ ດັ່ງນີ້:

1. ຂໍ້ມູນທາງດ້ານທໍລະນີສາດ ກ່ຽວກັບແຮ່ທາດທີ່ພົບໃໝ່;
2. ຜົນການຢັ້ງຢືນການວິໄຈຕົວຢ່າງ;
3. ຜົນການກວດກາພາກສະໜາມຂອງໜ່ວຍງານວິຊາການຂອງກະຊວງພະລັງງານ ແລະ ບໍ່ແຮ່.

## ມາດຕາ 15 ການຂໍໃບອະນຸຍາດສຳຫຼວດແຮ່ທາດ

ພາຍຫຼັງທີ່ບໍລິສັດໄດ້ສຳເລັດວຽກງານຊອກຄົ້ນແຮ່ທາດ ແລະ ໄດ້ຖືກຮັບຮອງບົດລາຍງານຜົນການຊອກຄົ້ນແລ້ວ ບໍລິສັດ ຕ້ອງຍື່ນແຜນການສຳຫຼວດແຮ່ທາດ ໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 50 ຂອງກົດໝາຍວ່າດ້ວຍແຮ່ທາດ.

## ມາດຕາ 16 ແຜນການສຳຫຼວດແຮ່ທາດ

ແຜນການສຳຫຼວດແຮ່ທາດ ໃຫ້ປະຕິບັດຕາມ ມາດຕາ 22 ຂອງກົດໝາຍວ່າດ້ວຍແຮ່ທາດ, ແຜນການສຳຫຼວດແຮ່ທາດປະກອບມີວຽກງານຕົ້ນຕໍ ດັ່ງນີ້:

1. ວັດແທກສ້າງແຜນທີ່ໂຕໂປ;
2. ວັດແທກທໍລະນີຟີຊິກ;
3. ສຳຫຼວດທໍລະນີສາດ;
4. ສຳຫຼວດທໍລະນີເຄມີ;

5. ທໍລະນີວິສາວະກຳ;
6. ອຸທົກກທໍລະນີ;
7. ທໍລະນີສິ່ງແວດລ້ອມ;
8. ເຈາະສຳຫຼວດດ້ວຍເຄື່ອງຈັກປະເພດຕ່າງໆຕາມຄວາມເໝາະສົມຂອງແຕ່ລະປະເພດແຮ່ທາດ ແລະ ໂຄງສ້າງຂອງຊັ້ນດິນ-ຫີນ ຫຼື ຄວາມສັບສົນຂອງປະເພດແຫຼ່ງແຮ່ທາດ;
9. ເກັບ ແລະ ວິໄຈຕົວຢ່າງປະເພດຕ່າງໆ;
10. ແລະ ວຽກງານອື່ນໆທີ່ເໝາະສົມກັບແຕ່ລະປະເພດແຮ່ທາດ ແລະ ແຫຼ່ງແຮ່.

ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາຮັບຮອງແຜນການສຳຫຼວດແຮ່ທາດ ພາຍໃນ ສາມສິບ (30) ວັນ ພາຍຫຼັງເອກະສານຄົບຖ້ວນ, ຖ້າເອກະສານບໍ່ຄົບຖ້ວນ ຈະແຈ້ງໃຫ້ບໍລິສັດຢ່າງເປັນລາຍລັກອັກສອນ ພາຍໃນ ສິບ (10) ວັນລັດຖະການ.

ບໍລິສັດ ຕ້ອງປັບປຸງເນື້ອໃນເອກະສານໃຫ້ຄົບຖ້ວນ ແລ້ວສົ່ງຄືນໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ພິຈາລະນາ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ.

ແຜນການສຳຫຼວດແຮ່ທາດ ນຳໃຊ້ ພາສາລາວ ເປັນຫຼັກ, ຖ້ານຳໃຊ້ ພາສາອັງກິດ ຕ້ອງສັງລວມຫຍໍ້ເປັນພາສາລາວ ແລະ ຕ້ອງໄດ້ຖືກຮັບຮອງຈາກນັກທໍລະນີສາດອາວຸໂສ (ຜູ້ຊຳນານງານ) ແລະ ຜູ້ອຳນວຍການຂອງບໍລິສັດ.

**ມາດຕາ 17 ການພິຈາລະນາອອກໃບອະນຸຍາດສຳຫຼວດແຮ່ທາດ**

ກະຊວງພະລັງງານ ແລະ ບໍ່ແຮ່ ຈະພິຈາລະນາອອກໃບອະນຸຍາດສຳຫຼວດແຮ່ທາດ ພາຍໃນ ສາມສິບ (30) ວັນ ພາຍຫຼັງເອກະສານຄົບຖ້ວນ. ໃນກໍລະນີສຳນວນເອກະສານບໍ່ຄົບຖ້ວນ ກະຊວງພະລັງງານ ແລະ ບໍ່ແຮ່ຕ້ອງແຈ້ງໃຫ້ບໍລິສັດ ພາຍໃນ ສິບ (10) ວັນ ຢ່າງເປັນລາຍລັກອັກສອນ.

ບໍລິສັດ ຕ້ອງປັບປຸງເນື້ອໃນເອກະສານໃຫ້ຄົບຖ້ວນ ແລ້ວສົ່ງຄືນໃຫ້ກົມທໍລະນີສາດ ແລະ ແຮ່ທາດ ພິຈາລະນາ ຢ່າງຊ້າ ສິບ (10) ວັນລັດຖະການ.

ອາຍຸໃບອະນຸຍາດສຳຫຼວດແຮ່ທາດ ໃຫ້ຖືເອົາມື້ທີ່ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ອອກຂໍ້ຕົກລົງວ່າດ້ວຍການສຳຫຼວດແຮ່ທາດ ເປັນຕົ້ນໄປ.

**ມາດຕາ 18 ການປັກຫຼັກໝາຍເນື້ອທີ່ສຳຫຼວດແຮ່ທາດ ພາກສະໜາມ**

ບໍລິສັດ ຕ້ອງສະເໜີໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອໄປປັກຫຼັກໝາຍເຂດເນື້ອທີ່ສຳຫຼວດແຮ່ທາດຢູ່ພາກສະໜາມ, ເຜີຍແຜ່ເອກະສານກ່ຽວກັບການເຫັນດີອະນຸຍາດໃຫ້ດຳເນີນການສຳຫຼວດແຮ່ທາດ ພ້ອມທັງແຈ້ງແຜນການ, ນິຕິກຳຕ່າງໆກ່ຽວກັບໂຄງການ. ການປັກຫຼັກໝາຍເນື້ອທີ່ສຳຫຼວດແຮ່ທາດ ຕ້ອງປະຕິບັດຕາມລະບຽບການທີ່ກະຊວງພະລັງງານ ແລະ ບໍ່ແຮ່ ວາງອອກ.

ການມີສ່ວນຮ່ວມຂອງໜ່ວຍງານໃນການປັກຫຼັກໝາຍເນື້ອທີ່ສຳຫຼວດແຮ່ທາດພາກສະໜາມ ປະກອບດ້ວຍພາກສ່ວນຕ່າງໆ ດັ່ງນີ້:

1. ຕາງໜ້າກົມທໍລະນີສາດ ແລະ ແຮ່ທາດ 02 ທ່ານ;
2. ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ 01 ທ່ານ;
3. ຕາງໜ້າຫ້ອງວ່າການປົກຄອງເມືອງ, ນະຄອນ 01 ທ່ານ;
4. ຕາງໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ນະຄອນ 01 ທ່ານ;
5. ຕາງໜ້າອົງການປົກຄອງບ້ານບ່ອນໂຄງການຕັ້ງຢູ່ 01 ທ່ານ.

ພາຍຫຼັງສຳເລັດການປັກຫຼັກໝາຍເນື້ອທີ່ສຳຫຼວດພາກສະໜາມແລ້ວ ໜ່ວຍງານກ່ຽວຂ້ອງຕ້ອງລາຍງານສະພາບການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ກົມທໍລະນີສາດ ແລະ ແຮ່ທາດ ຮັບຊາບ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ.

**ມາດຕາ 19 ການດຳເນີນວຽກງານສຳຫຼວດແຮ່ທາດ**

ບໍລິສັດ ຕ້ອງດຳເນີນວຽກງານສຳຫຼວດແຮ່ທາດພາກສະໜາມ ໃນເຂດເນື້ອທີ່ທີ່ໄດ້ຮັບອະນຸຍາດ ພາຍໃນ ເກົ້າສິບ (90) ວັນ ພາຍຫຼັງໄດ້ຮັບໃບອະນຸຍາດສຳຫຼວດແຮ່ທາດ ຈາກກະຊວງພະລັງງານ ແລະ ບໍ່ແຮ່, ພ້ອມທັງປະສານສົມທົບກັບອົງການປົກຄອງທ້ອງຖິ່ນບ່ອນໂຄງການຕັ້ງຢູ່, ຊຶ່ງການດຳເນີນວຽກງານພາກສະໜາມຕ້ອງມີວິຊາການ ຈາກຂະແໜງການພະລັງງານ ແລະ ບໍ່ແຮ່ ເຂົ້າຮ່ວມ.

ການດຳເນີນການສຳຫຼວດແຮ່ທາດ ຕ້ອງໃຫ້ສອດຄ່ອງກັບແຜນການທີ່ກະຊວງພະລັງງານ ແລະ ບໍ່ແຮ່ ຮັບຮອງເອົາ ຫຼື ຂໍ້ຕົກລົງ ວ່າດ້ວຍ ການແບ່ງຂັ້ນປະລິມານຊັບພະຍາກອນແຮ່ທາດ, ປະລິມານສະສົມແຮ່ທາດ, ການແບ່ງປະເພດແຫຼ່ງແຮ່ເພື່ອການສຳຫຼວດ ແລະ ເຕັກນິກການສຳຫຼວດແຮ່ທາດ ສະບັບເລກທີ 1419/ພບ, ລົງວັນທີ 26 ກໍລະກົດ 2019, ຕາມມາດຕະຖານສາກົນ ແລະ ສອດຄ່ອງຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 22 ຂອງກົດໝາຍວ່າດ້ວຍແຮ່ທາດ.

**ມາດຕາ 20 ການລາຍງານຜົນການສຳຫຼວດແຮ່ທາດ**

ບໍລິສັດ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການສຳຫຼວດແຮ່ທາດ ຕ້ອງລາຍງານຄວາມຄືບໜ້າຜົນການດຳເນີນວຽກງານສຳຫຼວດແຮ່ທາດ ປະຈຳງວດ, ປະຈຳປີ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ (ສູນກາງ ແລະ ທ້ອງຖິ່ນ) ເພື່ອຊາບ.

ການລາຍງານຄວາມຄືບໜ້າຂອງວຽກງານສຳຫຼວດແຮ່ທາດ ແມ່ນການລາຍງານໜ້າວຽກທີ່ໄດ້ຈັດຕັ້ງປະຕິບັດຕາມແຜນການສຳຫຼວດແຮ່ທາດທີ່ໄດ້ຖືກຮັບຮອງໂດຍກະຊວງພະລັງງານ ແລະ ບໍ່ແຮ່.

ການລາຍງານຜົນການສຳຫຼວດແຮ່ທາດ ແມ່ນການລາຍງານຕາມແບບຟອມບົດລາຍງານຜົນການສຳຫຼວດແຮ່ທາດ ຂອງກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ວາງອອກ. ບົດລາຍງານຜົນການສຳຫຼວດແຮ່ທາດຕ້ອງໄດ້ຖືກຮັບຮອງຈາກນັກທໍລະນີສາດອາວຸໂສ (ຜູ້ຊຳນານງານ) ແລະ ຜູ້ອຳນວຍການຂອງບໍລິສັດ.

ບໍລິສັດຕ້ອງສົ່ງບົດລາຍງານ ໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ພິຈາລະນາຢ່າງໜ້ອຍ ເກົ້າສິບ (90) ວັນ ກ່ອນທີ່ໃບອະນຸຍາດສຳຫຼວດແຮ່ທາດ ຈະໝົດອາຍຸ.

**ມາດຕາ 21 ການກວດກາວຽກງານເຕັກນິກພາກສະໜາມ**

ການກວດກາວຽກງານເຕັກນິກພາກສະໜາມ ແມ່ນການກວດກາການຈັດຕັ້ງປະຕິບັດວຽກງານການສຳຫຼວດແຮ່ທາດ ຕາມແຜນການທີ່ໄດ້ຖືກຮັບຮອງຈາກກະຊວງພະລັງງານ ແລະ ບໍ່ແຮ່, ຊຶ່ງວຽກງານທີ່ຈະຖືກກວດກາບໍລິສັດຕ້ອງປະຕິບັດໃຫ້ໄດ້ຢ່າງໜ້ອຍ ເກົ້າສິບ (90) ສ່ວນຮ້ອຍ ຂອງແຕ່ລະໜ້າວຽກ.

ຄະນະກວດກາວຽກງານເຕັກນິກພາກສະໜາມ ປະກອບດ້ວຍພາກສ່ວນຕ່າງໆ ດັ່ງນີ້:

1. ຕາງໜ້າກົມທໍລະນີສາດ ແລະ ແຮ່ທາດ 02 ທ່ານ;
2. ຕາງໜ້າພະແນກພະລັງງານ ແລະ ບໍ່ແຮ່ ແຂວງ, ນະຄອນຫຼວງ 01 ທ່ານ;
3. ຕາງໜ້າຫ້ອງການພະລັງງານ ແລະ ບໍ່ແຮ່ ເມືອງ, ນະຄອນ 01 ທ່ານ;
4. ຕາງໜ້າອຳນາດການປົກຄອງບ້ານບ່ອນໂຄງການຕັ້ງຢູ່ 01 ທ່ານ.

ພາຍຫຼັງສຳເລັດການກວດກາວຽກງານເກັບບົກພາກສະໜາມແລ້ວ ໜ່ວຍງານກ່ຽວຂ້ອງຕ້ອງລາຍງານສະພາບ ການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ກົມທໍລະນີສາດ ແລະ ແຮ່ທາດ ຮັບຊາບ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ.

### ມາດຕາ 22 ການຮັບຮອງບົດລາຍງານຜົນການສຳຫຼວດແຮ່ທາດ

ຂະແໜງການພະລັງງານ ແລະ ບໍ່ແຮ່ (ສູນກາງ ແລະ ທ້ອງຖິ່ນ) ຕ້ອງຄົ້ນຄວ້າ ແລະ ປະກອບຄຳເຫັນຕໍ່ບົດລາຍງານຜົນການສຳຫຼວດແຮ່ທາດ ພາຍໃນກຳນົດເວລາ ສາມສິບ (30) ວັນລັດຖະການ.

ໃນກໍລະນີ ເນື້ອໃນບົດລາຍງານບໍ່ຄົບຖ້ວນ, ບໍ່ຈະແຈ້ງ ຂະແໜງການພະລັງງານ ແລະ ບໍ່ແຮ່ ຈະຕ້ອງແຈ້ງໃຫ້ບໍລິສັດ ຮັບຊາບຢ່າງເປັນລາຍລັກອັກສອນ ພາຍໃນ ສິບຫ້າ (15) ວັນລັດຖະການ. ບໍລິສັດ ຕ້ອງປັບປຸງເນື້ອໃນເອກະສານໃຫ້ຄົບຖ້ວນ ແລ້ວສົ່ງຄືນໃຫ້ຂະແໜງການພະລັງງານ ແລະ ບໍ່ແຮ່ ພິຈາລະນາ ພາຍໃນກຳນົດເວລາ ສິບຫ້າ (15) ວັນລັດຖະການ.

ການຮັບຮອງບົດລາຍງານຜົນການສຳຫຼວດແຮ່ທາດ ຕ້ອງໄດ້ຜ່ານກອງປະຊຸມທາງດ້ານວິຊາການ ເພື່ອສັງລວມຂໍ້ມູນ ແລະ ເປັນເງື່ອນໄຂໃນການຮັບຮອງເອົາບົດລາຍງານສຳຫຼວດແຮ່ທາດ ພາຍໃນກຳນົດເວລາ ຊາວ (20) ວັນລັດຖະການ ຫຼັງຈາກບົດລາຍງານໄດ້ຖືກປັບປຸງຕາມການແນະນຳຂອງກອງປະຊຸມດັ່ງກ່າວ ແລະ ໄດ້ຮັບຮອງຈາກຄະນະກຳມະການຕີລາຄາ ແລະ ຮັບຮອງປະລິມານສະສົມແຮ່ທາດ ຕາມການເຫັນດີຂອງການນຳກະຊວງພະລັງງານ ແລະ ບໍ່ແຮ່.

ບົດລາຍງານຜົນການສຳຫຼວດແຮ່ທາດ ນຳໃຊ້ ພາສາລາວ ເປັນຫຼັກ, ຖ້ານຳໃຊ້ ພາສາອັງກິດ ຕ້ອງສັງລວມຫຍໍ້ບົດລາຍງານເປັນພາສາລາວ, ພ້ອມດຽວກັນນັ້ນ ການສະເໜີຜ່ານບົດລາຍງານຜົນການສຳຫຼວດແຮ່ທາດ ຕ້ອງແມ່ນນັກວິຊາການທໍລະນີສາດອາວຸໂສ (ຜູ້ຊຳນານງານ) ຂອງບໍລິສັດເປັນຜູ້ສະເໜີ.

### ມາດຕາ 23 ການຂໍຂະຫຍາຍເນື້ອທີ່ເພື່ອສຳຫຼວດແຮ່ທາດ

ການຂໍຂະຫຍາຍເນື້ອທີ່ເພື່ອສຳຫຼວດແຮ່ທາດ ໃຫ້ປະຕິບັດຕາມ ມາດຕາ 54 ຂອງກົດໝາຍວ່າດ້ວຍແຮ່ທາດ. ການສະເໜີຂໍຂະຫຍາຍເນື້ອທີ່ ຕ້ອງປະກອບເອກະສານ ດັ່ງນີ້:

1. ບົດລາຍງານທາງດ້ານທໍລະນີສາດ ກ່ຽວກັບ ສາຍແຮ່ ທີ່ຕິດພັນກັບສາຍແຮ່ທີ່ແກ່ຍາວອອກນອກເຂດສຳປະທານ;
2. ຜົນການຢັ້ງຢືນການວິໄຈຕົວຢ່າງ;
3. ແຜນທີ່ຂອບເຂດຂໍຂະຫຍາຍເນື້ອທີ່;
4. ຜົນການກວດກາພາກສະໜາມຂອງໜ່ວຍງານວິຊາການຂອງກະຊວງພະລັງງານ ແລະ ບໍ່ແຮ່;
5. ການຢັ້ງຢືນຂອງຂະແໜງການທີ່ກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນ ຕໍ່ເນື້ອທີ່ທີ່ຂໍຂະຫຍາຍ;
6. ແລະ ເອກະສານທີ່ກ່ຽວຂ້ອງ ແລະ ຈຳເປັນຈຳນວນໜຶ່ງ.

## ໝວດ 3
## ພັນທະທາງດ້ານການເງິນ

### ມາດຕາ 24 ພັນທະປະກອບສ່ວນຂອງບໍລິສັດ

ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການຊອກຄົ້ນແຮ່ທາດ, ສຳຫຼວດແຮ່ທາດ ຕ້ອງປະກອບສ່ວນພັນທະຕ່າງໆ ເຂົ້າໃນການຄຸ້ມຄອງໂຄງການ, ພັດທະນາຊັບພະຍາກອນມະນຸດ, ພັດທະນາທ້ອງຖິ່ນ, ພັດທະນາຊຸມຊົນ, ປົກປັກຮັກສາສິ່ງແວດລ້ອມ.

ການປະກອບສ່ວນພັນທະຕ່າງໆ ໃນວຽກງານການຊອກຄົ້ນແຮ່ທາດ ມີດັ່ງນີ້:

1. ຄຸ້ມຄອງໂຄງການ ຈຳນວນ 5.000 (ຫ້າພັນ) ໂດລາສະຫະລັດ/ປີ;
2. ພັດທະນາຊັບພະຍາກອນມະນຸດ ຈຳນວນ 5.000 (ຫ້າພັນ) ໂດລາສະຫະລັດ/ປີ;
3. ພັດທະນາທ້ອງຖິ່ນ ຈຳນວນ 10.000 (ສິບພັນ) ໂດລາສະຫະລັດ/ປີ;
4. ພັດທະນາຊຸມຊົນ ຈຳນວນ 10.000 (ສິບພັນ) ໂດລາສະຫະລັດ/ປີ;
5. ປົກປັກຮັກສາສິ່ງແວດລ້ອມ ຈຳນວນ 3.000 (ສາມພັນ) ໂດລາສະຫະລັດ/ປີ.

**ການປະກອບສ່ວນພັນທະຕ່າງໆ ໃນວຽກງານການສຳຫຼວດແຮ່ທາດ ມີດັ່ງນີ້:**

1. ຄຸ້ມຄອງໂຄງການ ຈຳນວນ 5.000 (ຫ້າພັນ) ໂດລາສະຫະລັດ/ປີ;
2. ພັດທະນາຊັບພະຍາກອນມະນຸດ ຈຳນວນ 5.000 (ຫ້າພັນ) ໂດລາສະຫະລັດ/ປີ;
3. ພັດທະນາທ້ອງຖິ່ນ ຈຳນວນ 15.000 (ສິບຫ້າພັນ) ໂດລາສະຫະລັດ/ປີ;
4. ພັດທະນາຊຸມຊົນ ຈຳນວນ 15.000 (ສິບຫ້າພັນ) ໂດລາສະຫະລັດ/ປີ;
5. ປົກປັກຮັກສາສິ່ງແວດລ້ອມ ຈຳນວນ 5.000 (ຫ້າພັນ) ໂດລາສະຫະລັດ/ປີ.

ພາຍຫຼັງທີ່ໄດ້ຮັບອະນຸຍາດໃຫ້ດຳເນີນການຊອກຄົ້ນແຮ່ທາດ, ສຳຫຼວດແຮ່ທາດ ແລ້ວ ບໍລິສັດ ຕ້ອງປະຕິບັດການປະກອບສ່ວນພັນທະຕ່າງໆ ໃຫ້ຄົບຖ້ວນ ພາຍໃນກຳນົດເວລາ ສິບຫ້າ (15) ວັນລັດຖະການ.

ພັນທະຕ່າງໆ ໃນໄລຍະຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຂ້າງເທິງນີ້ ແມ່ນກຳນົດເປັນຫຼັກການເພື່ອໃຫ້ບໍລິສັດຈັດຕັ້ງປະຕິບັດ, ແຕ່ຖ້າບໍລິສັດໃດຈະປະກອບສ່ວນຫຼາຍກວ່ານີ້ຍິ່ງເປັນການດີ.

**ມາດຕາ 25 ພັນທະຄ່າສຳປະທານ**

ບໍລິສັດທີ່ໄດ້ຮັບອະນຸຍາດໃຫ້ດຳເນີນວຽກງານຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຕ້ອງຈ່າຍພັນທະຄ່າສຳປະທານ ຕາມລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ວ່າດ້ວຍອັດຕາຄ່າເຊົ່າ ແລະ ສຳປະທານທີ່ດິນຂອງລັດ ສະບັບເລກທີ 02/ປປທ, ລົງວັນທີ 18 ພະຈິກ 2009 ຫຼື ຕາມສະບັບໃໝ່ທີ່ຈະປະກາດໃຊ້ໃນຕໍ່ໜ້າ.

ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງອອກໜັງສືແຈ້ງຈ່າຍຄ່າສຳປະທານ ພາຍໃນກຳນົດເວລາ ສິບ (10) ວັນລັດຖະການ ພາຍຫຼັງທີ່ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ອອກໃບອະນຸຍາດໃຫ້ດຳເນີນວຽກງານຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ບໍລິສັດ. ບໍລິສັດ ຕ້ອງຈ່າຍຄ່າສຳປະທານ ຕາມໜັງສືແຈ້ງ ພາຍໃນກຳນົດເວລາ ສິບຫ້າ (15) ວັນ ໃຫ້ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ.

## ໝວດ 4
## ການໂຈະ ແລະ ຖອນໃບອະນຸຍາດການຊອກຄົ້ນ ແລະ ສຳຫຼວດແຮ່ທາດ

**ມາດຕາ 26 ການໂຈະ ແລະ ຖອນໃບອະນຸຍາດການຊອກຄົ້ນ ແລະ ສຳຫຼວດແຮ່ທາດ**

ການໂຈະ ແລະ ຖອນໃບອະນຸຍາດການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ປະຕິບັດຕາມ ມາດຕາ 64, 65 ຂອງກົດໝາຍວ່າດ້ວຍແຮ່ທາດ.

ໃນກໍລະນີ ບໍລິສັດ ບໍ່ປະຕິບັດພັນທະປະກອບສ່ວນ, ພັນທະຄ່າສຳປະທານ ຕາມໜັງສືແຈ້ງຂອງກະຊວງພະລັງງານ ແລະ ບໍ່ແຮ່ ພາຍໃນ ສີ່ສິບຫ້າ (45) ວັນ, ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງແຈ້ງໂຈະໃບອະນຸຍາດ ແລະ ອອກໜັງສືແຈ້ງເຕືອນຕື່ມ ໃຫ້ບໍລິສັດ ປະຕິບັດພັນທະທາງດ້ານການເງິນໃຫ້ຄົບຖ້ວນ ພາຍໃນ ສິບຫ້າ

(15) ວັນ ນັບແຕ່ມື້ອອກໜັງສືແຈ້ງເຕືອນ. ໃນກໍລະນີ ບໍລິສັດ ບໍ່ປະຕິບັດຕາມການແຈ້ງເຕືອນ ພາຍຫຼັງໄດ້ແຈ້ງໃຫ້ແກ້ໄຂ ຫຼື ປັບປຸງ ສອງ (2) ຄັ້ງແລ້ວ, ກະຊວງພະລັງງານ ແລະ ບໍ່ແຮ່ ຈະສັ່ງຖອນໃບອະນຸຍາດ.

ໃນກໍລະນີ ບໍລິສັດ ບໍ່ປະຕິບັດຕາມເປົ້າໝາຍຂອງການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ເຊັ່ນ: ບໍ່ດຳເນີນການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ຕາມທີ່ໄດ້ລະບຸໄວ້ໃນໃບອະນຸຍາດ ແມ່ນຈະຖືກໂຈະ ຫຼື ຖອນໃບອະນຸຍາດເຊັ່ນດຽວກັນ.

ໃນກໍລະນີ ກະຊວງແຜນການ ແລະ ການລົງທຶນ ໄດ້ອອກໜັງສືແຈ້ງຖອນໃບອະນຸຍາດລົງທຶນ, ກະຊວງພະລັງງານ ແລະ ບໍ່ແຮ່ ຕ້ອງອອກໜັງສືລຶບລ້າງໃບອະນຸຍາດຊອກຄົ້ນ ຫຼື ສຳຫຼວດແຮ່ທາດ. ພ້ອມດຽວກັນນັ້ນຕ້ອງແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງສູນກາງ, ທ້ອງຖິ່ນ ແລະ ບໍລິສັດ ຮັບຊາບ.

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

ໃນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ໃຫ້ປະຕິບັດຕາມມາດຕາ 127, 128, 129, 130, 131, 132, 133 ແລະ ມາດຕາ 134 ຂອງກົດໝາຍວ່າດ້ວຍແຮ່ທາດ.

## ໝວດ 5
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ກະຊວງພະລັງງານ ແລະ ບໍ່ແຮ່, ອົງການທີ່ກ່ຽວຂ້ອງຂອງລັດ, ລັດວິສາຫະກິດ, ນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບບໍ່ແຮ່ ເປັນຜູ້ຈັດຕັ້ງປະຕິບັດຄຳແນະນຳສະບັບນີ້.

ໃນໄລຍະເວລາຈັດຕັ້ງປະຕິບັດ ຖ້າພົບບັນຫາໃດທີ່ຍັງບໍ່ສອດຄ່ອງ, ຊັດເຈນ ນິຕິບຸກຄົນ, ບຸກຄົນສາມາດມີຄຳຄິດເຫັນ ແລະ ຂໍ້ແນະນຳມາຍັງກະຊວງພະລັງງານ ແລະ ບໍ່ແຮ່ ເພື່ອແກ້ໄຂ ແລະ ປັບປຸງຕື່ມ.

ຂໍ້ຄວາມໃດ, ເນື້ອໃນໃດ ທີ່ບໍ່ໄດ້ກຳນົດໄວ້ໃນຄຳແນະນຳສະບັບນີ້ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍແຮ່ທາດ.

**ມາດຕາ 29 ຜົນສັກສິດ**

ຄຳແນະນຳສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນ ເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ (15) ວັນ.

ລັດຖະມົນຕີ

ກະຊວງພະລັງງານ ແລະ ບໍ່ແຮ່ ... ລັດຖະມົນຕີ

ດຣ.ຄຳມະນີ ອິນທິລາດ